**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສູນກາງແນວລາວສ້າງຊາດ
ຄະນະປະຈຳ

ເລກທີ....໐໔..ສ.../ຄປຈ

ນະຄອນຫຼວງວຽງຈັນ, ວັນທີ..໒໗/໓/໒໐໒໐

# ຄຳແນະນຳ

## ກ່ຽວກັບການສະຫຼອງວັນບຸນຕ່າງໆ ແລະ ປະຕິບັດບາງຮີດຄອງປະເພນີຂອງປະຊາຊົນລາວບັນດາຊົນເຜົ່າ

**ເຖິງ:** ປະທານແນວລາວສ້າງຊາດ ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ໃນທົ່ວປະເທດ

- ອີງຕາມແຈ້ງການຂອງຫ້ອງວ່າການສູນກາງພັກ ກ່ຽວກັບຄວາມເຫັນຊີ້ນຳຂອງຄະນະເລຂາທິການສູນກາງພັກຕໍ່ຮ່າງຄຳແນະນຳການປະຕິບັດຮີດຄອງປະເພນີຂອງບັນດາຊົນເຜົ່າ ໃນ ສປປ ລາວ ສະບັບເລກທີ 490/ຫສພ, ວັນທີ 11 ທັນວາ 2019;
- ອີງຕາມກົດໝາຍວ່າດ້ວຍແນວລາວສ້າງຊາດ ສະບັບປັບປຸງ ເລກທີ 49/ສພຊ, ວັນທີ 20 ມິຖຸນາ 2018;
- ອີງຕາມສະພາບການສະຫຼອງວັນບຸນຕ່າງໆ ແລະ ການປະຕິບັດຮີດຄອງປະເພນີຂອງປະຊາຊົນລາວບັນດາຊົນເຜົ່າ ໃນໄລຍະທີ່ຜ່ານມາ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ມີ 50 ຊົນເຜົ່າ, ແຕ່ລະຊົນເຜົ່າມີວັດທະນະທຳ, ຮີດຄອງປະເພນີ ແລະ ຄວາມເຊື່ອຕ່າງກັນ ໂດຍສະເພາະແມ່ນວັນບຸນຕ່າງໆ, ການສ້າງຄອບຄົວໃໝ່ ແລະ ຄວາມເຊື່ອຖື. ວັນບຸນຂອງແຕ່ລະຊົນເຜົ່າ ໄດ້ຈັດຕັ້ງການສະຫຼອງ ຕາມໄລຍະລະດູການແຕກຕ່າງກັນໃນແຕ່ລະປີ ແລະ ການປະຕິບັດບາງຮີດຄອງປະເພນີຂອງຕົນດ້ວຍຮູບການ ແລະ ເນື້ອໃນສະເພາະໃຫ້ມັນ. ສິ່ງເຫຼົ່ານັ້ນ ມີຄວາມໝາຍສຳຄັນ, ດຳເນີນດ້ວຍບັນຍາກາດອັນເບີກບານມ່ວນຊື່ນ, ມີຄວາມສາມັກຄີຮັກແພງກັນ ແລະ ມີຄວາມສະຫງົບ ຮັກສາໄດ້ຮີດຄອງປະເພນີທີ່ເປັນເອກະລັກຂອງຊາດ ແລະ ຂອງບັນດາຊົນເຜົ່າ. ແຕ່ວ່າມີບາງຊົນເຜົ່າການສະຫຼອງວັນບຸນ ແລະ ການປະຕິບັດບາງຮີດຄອງປະເພນີ ຊໍ້າພັດສຸມໃສ່ບາງດ້ານເປັນຈຸດໜັກ, ແກ່ຍາວເວລາ ແລະ ມີກິດຈະກຳຈຳນວນໜຶ່ງທີ່ບໍ່ແທດເໝາະກັບຍຸກສະໄໝ ຈຶ່ງສົ່ງຜົນສະທ້ອນຕໍ່ການປົກປັກຮັກສາ ແລະ ເສີມຂະຫຍາຍວັດທະນະທຳ ຮີດຄອງປະເພນີອັນດີງາມ ໃຫ້ຂະຫຍາຍຕົວ ແລະ ຄົງຕົວຄູ່ກັບຊາດ ແລະ ບັນດາຊົນເຜົ່າຢ່າງຍາວນານ.

ດັ່ງນັ້ນ, ເພື່ອຮັບປະກັນໃຫ້ການສະຫຼອງວັນບຸນຕ່າງໆ ແລະ ການປະຕິບັດບາງຮີດຄອງປະເພນີຂອງປະຊາຊົນລາວບັນດາຊົນເຜົ່າ ໃຫ້ມີຄວາມສະຫງົບເປັນລະບຽບຮຽບຮ້ອຍ, ປົກປັກຮັກສາ ແລະ ເສີມຂະຫຍາຍບັນດາຮີດຄອງປະເພນີ, ວັດທະນະທຳຂອງຊາດ ແລະ ຂອງບັນດາຊົນເຜົ່າ, ຄະນະປະຈຳສູນກາງແນວລາວສ້າງຊາດ ໄດ້ອອກຄຳແນະນຳດັ່ງນີ້:

### I. ຈຸດປະສົງ ແລະ ລະດັບຄາດໝາຍ

1. ເພື່ອອະນຸລັກ ແລະ ເສີມຂະຫຍາຍວັດທະນະທຳ ຮີດຄອງປະເພນີອັນດີງາມ ແນໃສ່ເພີ່ມທະວີຄວາມສະເໝີພາບ ແລະ ສາມັກຄີປອງດອງພາຍໃນຊົນເຜົ່າ ແລະ ລະຫວ່າງບັນດາຊົນເຜົ່າດ້ວຍກັນ ພ້ອມກັນປົກຫຼູສະຕິ

ຄວາມເປັນເຈົ້າຕົນເອງ ຈັດຕັ້ງການສະຫຼອງວັນບຸນຕ່າງໆ ແລະ ດຳເນີນຮີດຄອງປະເພນີອື່ນໆ ໃຫ້ເປັນເອກະພາບທາງດ້ານເນື້ອໃນ, ຮູບການ, ວິທີການ ແລະ ເວລາ.

2. ເພື່ອຫຼຸດຜ່ອນພຶດຕິກຳທີ່ບໍ່ເໝາະສົມກັບວັດທະນະທຳ ຮີດຄອງປະເພນີອັນດີງາມ ເປັນການບຸກທະລຸທາງດ້ານຈິນຕະນາການ ແລະ ແກ້ໄຂສິ່ງກີດຂວາງໃນສະພາບແວດລ້ອມ ເສດຖະກິດຕະຫຼາດ ແລະ ການເຊື່ອມໂຍງສາກົນຕໍ່ການພັດທະນາໃນເງື່ອນໄຂປັດຈຸບັນ.

## II. ເນື້ອໃນ

### 1. ການສະຫຼອງວັນບຸນຕ່າງໆ

ການດຳລົງຊີວິດຂອງປະຊາຊົນລາວບັນດາຊົນເຜົ່າໃນທ້ອງຖິ່ນຕ່າງໆ ແມ່ນຕິດພັນກັບການປະຕິບັດວັດທະນະທຳ ຮີດຄອງປະເພນີອັນດີງາມ ໂດຍສະເພາະແມ່ນວັນບຸນຕ່າງໆ ທີ່ຈັດຂຶ້ນເປັນໄລຍະ, ເວລາ, ມີເນື້ອໃນ, ຮູບການ, ກິດຈະກຳ ແລະ ວິທີການ ອັນແນ່ນອນ ທົ່ວໄປແລ້ວແຕ່ລະວັນບຸນແມ່ນມີຄວາມໝາຍສຳຄັນ. ການຈັດຕັ້ງສະຫຼອງວັນບຸນຕ່າງໆຂອງບັນດາຊົນເຜົ່າ ສ່ວນຫຼາຍແມ່ນດ້ວຍຮູບການຄອບຄົວ ແລະ ບາງຄັ້ງກໍມີທັງຮອມໝູ່ຢູ່ໃນບາງທ້ອງຖິ່ນ.

ການຈັດຕັ້ງສະຫຼອງວັນບຸນຕ່າງໆ ແບບຮອມໝູ່ ຫຼື ຈັດເທດສະການວັນບຸນຢູ່ໃນທ້ອງຖິ່ນໃດໜຶ່ງນັ້ນ ແມ່ນຈະຕ້ອງມີແຜນການ, ມີໜັງສືສະເໜີຂອງພາກສ່ວນ ຫຼື ຜູ້ຕາງໜ້າ ທີ່ມີຈຸດປະສົງຈັດການສະຫຼອງວັນບຸນເພື່ອຍື່ນໃຫ້ແນວລາວສ້າງຊາດ ແລະ ຂະແໜງການກ່ຽວຂ້ອງຂັ້ນທ້ອງຖິ່ນນັ້ນ ເປັນບ່ອນອີງຄົ້ນຄວ້າ ແລະ ລາຍງານຕໍ່ຄະນະພັກ ແລະ ອົງການປົກຄອງ ພິຈາລະນາອະນຸມັດ. ໃນຂໍ້ຕົກລົງອະນຸມັດຈັດງານ ແລະ ແຕ່ງຕັ້ງອະນຸກຳມະການດ້ານຕ່າງໆ ຈະຕ້ອງລະບຸແຈ້ງ ໄລຍະ, ເວລາ ແລະ ກິດຈະກຳ ທີ່ສອດຄ່ອງກັບວັດທະນະທຳ ຮີດຄອງປະເພນີຂອງຊົນເຜົ່າ ເຮັດໃຫ້ການກະກຽມ ແລະ ສະຫຼອງມີຄວາມສະດວກ; ພ້ອມກັນນີ້ ເພື່ອໃຫ້ການສະຫຼອງມີຈຸດສຸມອົງການປົກຄອງຂັ້ນນັ້ນອາດຈະອະນຸມັດໃຫ້ຈັດງານພຽງແຕ່ຈຸດໜຶ່ງຕໍ່ປີ.

ການສະຫຼອງວັນບຸນແມ່ນແນໃສ່ປົກປັກຮັກສາ, ອະນຸລັກ ແລະ ສົ່ງເສີມກິດຈະການ, ກິດຈະກຳທີ່ເປັນເອກະລັກວັດທະນະທຳ ຮີດຄອງປະເພນີອັນດີງາມຂອງຊາດ ແລະ ຊົນເຜົ່າ ເຊັ່ນ: ກິດຈະກຳພິທີກຳຂອງບຸນ, ວິຖີຊີວິດ, ການນຸ່ງຖື, ສິລະປະການສະແດງ, ເດີນແບບອາພອນເພດຊົງຊົນເຜົ່າ, ການຂັບລຳ, ນຳໃຊ້ເຄື່ອງດົນຕີ: ສີຊໍ, ແຄນ, ປີ່, ຂຸ່ຍ; ແຂ່ງຂັນກິລາພື້ນບ້ານ, ກິລາສົດ, ອາຫານ, ເຄື່ອງດື່ມ, ປາສະໝຸນໄພ; ຈັດຕະຫຼາດວາງສະແດງ ແລະ ຂາຍຜົນຜະລິດກະສິກຳ, ເຄື່ອງຫັດຖະກຳ ແລະອື່ນໆ ໃຫ້ບັນດາຄອບຄົວຂອງຊົນເຜົ່າຕ່າງໆ ພາຍໃນບ້ານ ແລະ ບ້ານໃກ້ຄຽງ ຂຸດຄົ້ນນຳໃຊ້ມູນເຊື້ອພູມປັນຍາ ແລະ ຄວາມເປັນເຈົ້າການພັດທະນາແກ້ໄຂຄວາມທຸກຍາກ;

ໃນໄລຍະເວລາສະຫຼອງວັນບຸນຕ່າງໆຂອງບັນດາຊົນເຜົ່າ ໃຫ້ຖືເປັນໂອກາດສຳຄັນໃນການໂຄສະນາ, ເຜີຍແຜ່, ສຶກສາອົບຮົມ, ຮຽນຮູ້ມູນເຊື້ອ ແລະ ຜົນງານທາງດ້ານວັດທະນະທຳ, ຮີດຄອງປະເພນີອັນດີງາມ ເພື່ອປົກປັກຮັກສາ ແລະ ສົ່ງເສີມໃຫ້ຂະຫຍາຍຕົວ, ອັນອ່ອນຫຍໍ້ທໍ້ບໍ່ສອດຄ່ອງກັບການພັດທະນາໃນຍຸກສະໄໝໃໝ່ນັ້ນແມ່ນໃຫ້ແກ້ໄຂ ແລະ ກຳຈັດຢ່າງຈິງຈັງ. ແນໃສ່ເຊີດຊູສິດເປັນເຈົ້າ, ເສີມສ້າງຄວາມເປັນເອກະພາບ, ຄວາມສະເໝີພາບ ແລະ ຄວາມສາມັກຄີປອງດອງໃຫ້ແໜ້ນແຟ້ນ.

ເອົາໃຈໃສ່ປ້ອງກັນຄວາມສະຫງົບ ແລະ ຄວາມປອດໄພໃນໄລຍະເວລາກ່ອນ ແລະ ຫຼັງການຈັດຕັ້ງສະຫຼອງວັນບຸນໃນຄອບຄົວ ແລະ ຮອມໝູ່. ຫຼຸດຜ່ອນການຫຼິ້ນກິນຟຸມເຟືອຍ, ດື່ມເຫຼົ້າເມົາສຸລາ, ບໍ່ມົ່ວສຸມສິ່ງລາມົກ, ບໍ່ຫຼິ້ນການພະນັນ, ບໍ່ໃຫ້ປະວຽກງານ, ການຮຽນ, ການຜະລິດ, ການສ້າງສາພັດທະນາ ແລະອື່ນໆ. ເວລາດຳເນີນພິທີກຳຕ່າງໆບໍ່ໃຫ້ຍິງປືນ, ບໍ່ຈູດໝາກກະໂພກ ແລະ ສ້າງສິ່ງທີ່ມີສຽງແຕກດັງ;

ສຳລັບຊົນເຜົ່າມົ້ງ ມີວັນບຸນ ຊຶ່ງເອີ້ນວ່າ ບຸນນໍ່ເປົ່າເຈົ້າ (ບຸນກິນຈຽງ) ຕາມພາສາຂອງຊົນເຜົ່າມົ້ງ ນັບແຕ່ວັນອອກຄຳແນະນຳສະບັບນີ້ເປັນຕົ້ນໄປ ໃຫ້ມີຄວາມເປັນເອກະພາບໃນການຈັດບຸນນໍ່ເປົ່າເຈົ້າ ໂດຍເລີ່ມຈາກການສົ່ງປີເກົ່າ ແລະ ຕ້ອນຮັບປີໃໝ່ໃນຕອນແລງແຮມ 14 ຄ່ຳ ເດືອນຈຽງ (ເດືອນ 1) ປີ ພສ ກົງກັບເດືອນ ທັນວາ (ເດືອນ 12) ປີ ຄສ, ເວລາຈັດບຸນນໍ່ເປົ່າເຈົ້າ ແມ່ນ 03 ວັນ ນັບແຕ່ວັນຂຶ້ນໃໝ່ 1 ຄ່ຳ, 2 ຄ່ຳ ແລະ 3 ຄ່ຳຂອງເດືອນຍີ່ (ເດືອນ 2) ປີ ພສ. ການສະຫຼອງວັນບຸນເພື່ອໃຫ້ມີບັນຍາກາດສ້າງສັນສາມັກຄີຮັກແພງ, ມີຄວາມເບີກບານມ່ວນ

ຊົນ ທັງເປັນການຊຸກຍູ້ການສ້າງສາພັດທະນາເສດຖະກິດ, ສັງຄົມ ແລະ ຄອບຄົວ ອາດຈະຈັດການສະຫຼອງຮວມໝູ່ ຫຼື ຈັດເທດສະການບໍ່ເປັນຈ້ຳຢູ່ບາງຈຸດຂອງທ້ອງຖິ່ນ ຕາມຄວາມເໝາະສົມ.

**2. ການສ້າງຄອບຄົວໃໝ່**

ການສ້າງຄອບຄົວໃໝ່ແມ່ນເປັນກິດຈະການຂອງສັງຄົມມະນຸດ ແຕ່ລະຊົນເຜົ່າມີຮູບແບບ ແລະ ວິທີການສ້າງຄອບຄົວໃໝ່ແຕກຕ່າງກັນ ເຖິງຢ່າງໃດ ກໍໃຫ້ປະຕິບັດກົດປະເພນີ ແລະ ສົ່ງເສີມວັດທະນະທຳຮີດຄອງປະເພນີໃນການສ້າງຄອບຄົວໃໝ່ທີ່ເປັນມູນເຊື້ອອັນດີງາມຂອງຕົນ ຕິດພັນກັບການປະຕິບັດບັນດາກົດໝາຍ ເຊັ່ນ: ກົດໝາຍວ່າດ້ວຍຄອບຄົວ, ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງລາວ ແລະ ກົດໝາຍອື່ນໆ ຂອງ ສປປ ລາວ ແນໃສ່ຮັບປະກັນການສ້າງຄວາມສະເໝີພາບ, ຄວາມສາມັກຄີປອງດອງ, ການໃຫ້ຄວາມສຳຄັນ ແລະ ສິດທິເທົ່າທຽມກັນ ລະຫວ່າງຊາຍ ແລະ ຍິງ ຢູ່ໃນຄອບຄົວ ແລະ ສັງຄົມ, ການເລືອກ ແລະ ສະໝັກໃຈເປັນຜົວເມຍ, ການປະກອບອາຊີບ ແລະອື່ນໆ.

ເພີ່ມທະວີການຕ້ານ ແລະ ສະກັດກັ້ນການສ້າງຄອບຄົວໃໝ່ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍວາງອອກ ເຊັ່ນ: ການສ້າງຄອບຄົວແບບບໍ່ສະໝັກໃຈ, ການແຕ່ງດອງແອບແຝງ, ການຄ້າມະນຸດ, ການຄ້າໄສເພນີ, ການປະຕິບັດບາງຮີດຄອງປະເພນີມີລັກສະນະເກົ່າແກ່ ບໍ່ສອດຄ່ອງກັບຍຸກສະໄໝ ແລະອື່ນໆ.

**3. ຄວາມເຊື່ອຖືຕ່າງໆ**

ການປະຕິບັດຄວາມເຊື່ອຖື ແມ່ນຄວາມຮຽກຮ້ອງຕ້ອງການທາງດ້ານຈິດໃຈ ແລະ ມະໂນທຳຂອງປະຊາຊົນລາວບັນດາຊົນເຜົ່າ ມາເປັນເວລາຍາວນານເຖິງປັດຈຸບັນ. ການປະຕິບັດຄວາມເຊື່ອຖືອັນໃດກໍ່ລ້ວນແຕ່ແມ່ນສິ່ງທີ່ດີ ແຕ່ຈະຕ້ອງໃຫ້ສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ກົດລະບຽບ, ມີລັກສະນະວິທະຍາສາດ, ລັກສະນະມະຫາຊົນ ໂດຍສະເພາະແມ່ນວັດທະນະທຳ ຮີດຄອງປະເພນີອັນດີງາມ ແລະ ບໍ່ສົ່ງຜົນກະທົບຕໍ່ການດຳລົງຊີວິດຂອງປະຊາຊົນ.

ການປົງສົບສົ່ງສະການ (ຊາປະນະກິດສົບ) ແມ່ນງານທີ່ເກີດຂຶ້ນໂດຍບັງເອີນທີ່ບໍ່ສາມາດຫຼີກລ້ຽງໄດ້ ແຕ່ລະຊົນເຜົ່າມີຮີດຄອງປະເພນີໃນການຄົບງັນຕາມຄວາມເຊື່ອຖືທີ່ເໝາະສົມ ແຕ່ວ່າໃຫ້ພະຍາຍາມດຳເນີນພິທີທາງການ ແລະ ພິທີກຳທີ່ກະທັດຮັດ, ມີຄວາມປອດໄພທາງດ້ານສິ່ງແວດລ້ອມ, ສຸຂາອະນາໄມ, ວັດທະນະທຳ, ຖານະ, ທັງປະຢັດຊັບສິນເປັນເງິນ, ວັດຖຸ, ສັດລ້ຽງ, ທີ່ດິນ, ເວລາ ແລະອື່ນໆ. ເອົາໃຈໃສ່ເບິ່ງແຍງຊ່ວຍເຫຼືອຊຶ່ງກັນ ແລະ ກັນ ດ້ວຍຄວາມເມດຕາ, ຈັນຍາບັນ, ຈັນຍາທຳ ແລະ ນ້ຳໃຈມະນຸດສະທຳ.

ເອົາໃຈໃສ່ປ້ອງກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຢູ່ໃນງານດັ່ງກ່າວ. ບໍ່ສວຍໃຊ້ຊຸບການຕ່າງໆບາງ ທາງຮີດຄອງປະເພນີທີ່ບໍ່ເໝາະສົມ ອັນຈະກໍ່ໃຫ້ແຕກແຍກຄວາມສາມັກຄີ; ການດຳເນີນພິທີກຳຮີດຄອງປະເພນີບໍ່ໃຫ້ຍິງປືນ ແລະ ຈູດເຄື່ອງສົ່ງມີສຽງແຕກດັງ; ບໍ່ໃຫ້ເອົາເຮືອນດີເປັນບ່ອນກິນ ແລະ ດື່ມ ຊຸມເຟືອຍ, ຫຼິ້ນການພະນັນ, ເສບສິ່ງມືນເມົາ ແລະ ຢາເສບຕິດ.

**III. ການຈັດຕັ້ງປະຕິບັດ**

1. ຄະນະພັກ ຄະນະປະຈຳສູນກາງແນວລາວສ້າງຊາດ ສົມທົບບັນດາຄະນະຂອງພັກ, ບັນດາຄະນະພັກກະຊວງ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ແລະ ພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງເຊື່ອມຊຶມເນື້ອໃນຈິດໃຈ ຄຳແນະນຳສະບັບນີ້ໃຫ້ເລິກເຊິ່ງ ແລະ ທົ່ວເຖິງ;

2. ແນວລາວສ້າງຊາດນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ຈົ່ງປະສານສົມທົບກັບຄະນະພັກ, ອົງການປົກຄອງ, ຂະແໜງການພາຍໃນ, ຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ກຳມະການແນວລາວສ້າງຊາດ, ຜູ້ຊົງຄຸນວຸດທິ ແລະ ພາກສ່ວນຕ່າງໆ ໂຄສະນາເຜີຍແຜ່ຄຳແນະນຳ

ສະບັບນີ້ໃຫ້ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນລາວບັນດາຊົນເຜົ່າ ມີຄວາມຮັບຮູ້ເຂົ້າໃຈເລິກເຊິ່ງ, ມີຄວາມຕື່ນຕົວເປັນເຈົ້າການເຂົ້າຮ່ວມຈັດຕັ້ງປະຕິບັດຕົວຈິງ;

3. ແນວລາວສ້າງຊາດແຕ່ລະຂັ້ນ, ກຳມະການແນວລາວສ້າງຊາດ ແລະ ຜູ້ຊົງຄຸນວຸດທິ ໃຫ້ສົມທົບກັບພາກສ່ວນກ່ຽວຂ້ອງ ຕິດຕາມກວດກາ, ຊຸກຍູ້ ແລະ ປະເມີນຜົນການຈັດຕັ້ງປະຕິບັດໃນແຕ່ລະປີ, ແນໃສ່ກຳແໜ້ນສະພາບຄວາມເປັນຈິງ ເພື່ອສຶກສາອົບຮົມ ເພີ່ມທະວີຄວາມສາມັກຄີປອງດອງພາຍໃນຊົນເຜົ່າ ແລະ ລະຫວ່າງຊົນເຜົ່າຕ່າງໆ ໃຫ້ເປັນອັນໜຶ່ງອັນດຽວທີ່ໜັກແໜ້ນ, ເຊີດຊູຈິດໃຈປົກປັກຮັກສາ ແລະ ເສີມຂະຫຍາຍວັດທະນະທຳ ຮີດຄອງປະເພນີອັນດີງາມໃຫ້ເຕີບໃຫຍ່ຂະຫຍາຍຕົວ, ຄົງຕົວຄູ່ກັບຊາດ ແລະ ຊົນເຜົ່າຢ່າງຍາວນານ. ພ້ອມທັງມີການປັບປຸງ, ແກ້ໄຂຈຸດອ່ອນຄົງຄ້າງ ແລະ ສິ່ງຫຍໍ້ທໍ້ທ້າທາຍຕ່າງໆ ທີ່ຮັດຕັນໃຫ້ມີຄວາມທະລຸລົ່ງ.

4. ກົມຊົນເຜົ່າ ສູນກາງແນວລາວສ້າງຊາດ ເປັນໃຈກາງປະສານສົມທົບແນວລາວສ້າງຊາດຂັ້ນທ້ອງຖິ່ນ ແລະ ພາກສ່ວນຕ່າງໆ ເພື່ອຕິດຕາມກວດກາ, ສະຫຼຸບສັງລວມສະພາບການຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈຄຳແນະນຳສະບັບນີ້ ໂດຍລາຍງານຜົນສຳເລັດ, ຄວາມສະດວກ ແລະ ຫຍຸ້ງຍາກ ໃຫ້ຂັ້ນເທິງຮັບຊາບ ແລະ ຂໍທິດຊີ້ນຳຕໍ່ການປັບປຸງ ແລະ ແກ້ໄຂບັນຫາໃຫ້ເໝາະສົມ, ວ່ອງໄວ ແລະ ທັນການ.

**ຄະນະປະຈຳສູນກາງແນວລາວສ້າງຊາດ**

**ປະທານ**

ປອ ໄຊສົມພອນ ພົມວິຫານ

**ບ່ອນສົ່ງ:**

- ຫ້ອງວ່າການສູນກາງພັກ — 1 ສະບັບ
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ — 1 ສະບັບ
- ຫ້ອງວ່າການສຳນັກງານປະທານປະເທດ — 1 ສະບັບ
- ຄະນະເລຂາທິການສະພາແຫ່ງຊາດ — 1 ສະບັບ
- ຮອງປະທານສູນກາງແນວລາວສ້າງຊາດ — 7 ສະບັບ
- ສຳເນົາ — 1 ສະບັບ
- **ແນວລາວສ້າງຊາດນະຄອນຫຼວງວຽງຈັນ ບັນດາແຂວງ — ບ່ອນລະສະບັບ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສູນກາງແນວລາວສ້າງຊາດ
ຫ້ອງການ

ເລກທີ 139 /ຫກ
ນະຄອນຫຼວງວຽງຈັນ, ວັນທີ 24/5/2020

## ແຈ້ງການ

**ເຖິງ:** ແນວລາວສ້າງຊາດນະຄອນຫຼວງວຽງຈັນ ແລະ ບັນດາແຂວງໃນຂອບເຂດທົ່ວປະເທດ.
**ເລື່ອງ:** ການຈັດຕັ້ງປະຕິບັດຄໍາແນະນໍາການສະເຫຼີມສະຫຼອງວັນບຸນປະເພນີຂອງປະຊາຊົນລາວບັນດາເຜົ່າ.

- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການສູນກາງແນວລາວສ້າງຊາດ ສະບັບເລກທີ 068/ຄປຈ, ລົງວັນທີ 8 ກັນຍາ 2017.
- ອີງຕາມ ຄໍາແນະນໍາຂອງຄະນະປະຈໍາສູນກາງແນວລາວສ້າງຊາດ ເລກທີ 047/ຄປຈ, ລົງວັນທີ 27 ມີນາ 2020 ກ່ຽວກັບການສະເຫຼີມສະຫຼອງວັນບຸນຕ່າງໆ ແລະ ປະຕິບັດປາງຮີດຄອງປະເພນີຂອງປະຊາຊົນລາວບັນດາເຜົ່າ.

ຫ້ອງການສູນກາງແນວລາວສ້າງຊາດ ຂໍຖືເປັນກຽດແຈ້ງມາຍັງແນວລາວສ້າງຊາດນະຄອນຫລວງວຽງຈັນ ແລະ ບັນດາແຂວງໃນຂອບເຂດທົ່ວປະເທດ ຊາບວ່າ ປະຈຸບັນຄະນະປະຈໍາສູນກາງແນວລາວສ້າງຊາດ ໄດ້ອອກຄໍາແນະນໍາ ເລກທີ 047/ຄປຈ, ລົງວັນທີ 27 ມີນາ 2020 ກ່ຽວກັບການສະເຫຼີມສະຫຼອງວັນບຸນຕ່າງໆ ແລະ ການປະຕິບັດປາງຮີດຄອງປະເພນີຂອງປະຊາຊົນລາວບັນດາເຜົ່າ.

ສະນັ້ນ, ໃຫ້ແນວລາວສ້າງຊາດນະຄອນຫລວງວຽງຈັນ, ແນວລາວສ້າງຊາດບັນດາແຂວງໃນຂອບເຂດທົ່ວປະເທດ ແລະ ພາກສ່ວນກ່ຽວຂ້ອງ ນໍາເອົາເນື້ອໃນຄໍາແນະນໍາດັ່ງກ່າວ ໄປຈັດຕັ້ງໂຄສະນາ, ເຜີຍແຜ່ ແລະ ຜັນຂະຫຍາຍໃຫ້ເລິກເຊິ່ງ ແລະ ກວ້າງຂວາງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ. ພ້ອມດຽວກັນນັ້ນ, ກໍໃຫ້ເອົາໃຈໃສ່ການຕິດຕາມກວດກາ, ຊຸກຍູ້ ແລະ ປະເມີນຜົນການຈັດຕັ້ງປະຕິບັດໃນແຕ່ລະໄລຍະເປັນປົກກະຕິ ພ້ອມທັງລາຍງານໃຫ້ກົມຊົນເຜົ່າ ສູນກາງແນວລາວສ້າງຊາດ ເພື່ອສະຫຼຸບສັງລວມລາຍງານຂັ້ນເທິງຊາບທຸກໆປີ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງແນວລາວສ້າງຊາດຂັ້ນຕ່າງໆ ແລະ ພາກສ່ວນກ່ຽວຂ້ອງ ເພື່ອຊາບ ແລະ ເປັນເຈົ້າການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

**ຫົວໜ້າຫ້ອງການ**

ດຣ.ຈັນເພັງ ສຸດທິວົງ